# ທະນາຄານ ຮ່ວມພັດທະນາ ຈຳກັດ

## ເອກະສານລາຍງານການເງິນ

ວັນທີ 31 ທັນວາ 2021



www.pwc.com/la

**ທະນາຄານ ຮ່ວມພັດທະນາ ຈຳກັດ**

**ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021**

---

**ສາລະບານ** **ໜ້າ**


| | |
|---|---|
| ຂໍ້ມູນທົ່ວໄປ | 1 - 2 |
| ບົດລາຍງານຂອງຄະນະອຳນວຍການ | 3 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 4 - 6 |
| ໃບລາຍງານຜົນການດຳເນີນງານ | 7 |
| ໃບລາຍງານຖານະການເງິນ | 8 - 9 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 10 – 11 |
| ໃບລາຍງານກະແສເງິນສົດ | 12 - 13 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 14 - 43 |

# ທະນາຄານ ຮ່ວມພັດທະນາ ຈຳກັດ

## ຂໍ້ມູນທົ່ວໄປ

### ທະນາຄານ

ທະນາຄານ ຮ່ວມພັດທະນາ ຈຳກັດ ("ທະນາຄານ") ແມ່ນທະນາຄານເອກະຊົນຈຳກັດ ທີ່ໄດ້ດຳເນີນງານ ແລະ ຈົດທະບຽນຢູ່ ໃນ ສປປ ລາວ.

ທະນາຄານໄດ້ສ້າງຕັ້ງຂຶ້ນພາຍໃຕ້ສັນຍາຮ່ວມລົງທຶນ ລົງວັນທີ 2 ກຸມພາ 1989 ລະຫວ່າງທະນາຄານ ແຫ່ງ ສປປ ລາວ ແລະ ບໍລິສັດ ພົມສຸວັນ ໄຊໂລ ແລະ ອົບພົດ ຈຳກັດ, ເປັນກຸ່ມບໍລິສັດ ປະເທດໄທ. ເຊິ່ງພາຍໃຕ້ຂໍ້ຕົກລົງ, ບໍລິສັດ ພົມສຸວັນ ໄຊໂລ ແລະ ອົບພົດ ຈຳກັດ ແມ່ນຖືຮຸ້ນ 70% ແລະ ທຫລ ແມ່ນ 30% ຕາມລຳດັບ. ໃນປີ 2010, ທຫລ ໄດ້ໂອນທຶນປະກອບທັງໝົດໃຫ້ແກ່ ບໍລິສັດ ພົມສຸວັນ ໄຊໂລ ແລະ ອົບພົດ ຈ□າກັດ ແລະ ຫຼັງຈາກນັ້ນໃນປີ 2012, ບໍລິສັດ ພົມສຸວັນ ໄຊໂລ ແລະ ອົບພົດ ຈຳກັດ ໄດ້ຂາຍຮຸ້ນທັງ 100% ໃຫ້ແກ່ນັກລົງທຶນພາຍໃນ.

ທະນາຄານດຳເນີນທຸລະກິດພາຍໃຕ້ຂໍ້ຕົກລົງ ເລກທີ 04/PMA ອອກໂດຍປະທານຫ້ອງວ່າການລັດຖະມົນຕີ ແລະ ຂໍ້ຕົກລົງ ເລກທີ 04/ທຫລ ລົງວັນທີ 21ມັງກອນ 1989, ສະບັບດັດແກ້ຂອງໃບອະນຸຍາດລົງທຶນ  ເລກທີ 133/10 ລົງວັນທີ 23 ກັນຍາ 2010 ອອກໂດຍກະຊວງແຜນການ ແລະ ການລົງທຶນ ແລະ ພາຍໃຕ້ໃບທະບຽນວິສະຫະກິດ 0234/ທຈທ ລົງວັນທີ 3 ພຶດສະພາ 2013 ເຊິ່ງອອກໂດຍ ກະຊວງອຸດສະຫະກຳ ແລະ ການຄ້າ.

ກິດຈະກຳຫຼັກຂອງທະນາຄານແມ່ນໃຫ້ບໍລິການທາງດ້ານ: ການລະດົມທຶນ ແລະ ການຮັບຝາກເງິນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຈາກບັນດາອົງການຈັດຕັ້ງ ແລະ ບຸກຄົນຕ່າງໆ; ການປ່ອຍກູ້ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວໃຫ້ແກ່ອົງການຈັດຕັ້ງ ແລະ ບຸກຄົນທົ່ວໄປ ອີງຕາມເນື້ອໃນ ແລະ ຄວາມອາດສາມາດຂອງແຫຼ່ງເງິນທຶນຂອງທະນາຄານ; ການເຮັດທຸລະກຳເງິນຕາຕ່າງປະເທດ; ບໍລິການດ້ານການເງິນລະຫວ່າງປະເທດ; ສ່ວນຫຼຸດໃບຢັ້ງຢືນການຄ້າ, ພັນທະບັດ ແລະ ເອກະສານທີ່ມີມູນຄ່າຕ່າງໆ. ໃຫ້ບໍລິການອື່ນໆດ້ານການທະນາຄານຕາມທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ອາຄານ ເລກທີ 82, ຖະໜົນລ້ານຊ້າງ, ນະຄອນຫຼວງວຽງຈັນ, ສປປ ລາວ. ໃນວັນທີ 31 ທັນວາ 2021, ທະນາຄານມີສຳນັກງານໃຫຍ່ ໜຶ່ງ (1) ແຫ່ງ, ໜ່ວຍບໍລິການ ຫ້າສິບຫົກ (56) ແລະ ໜ່ວຍບໍລິການຍ່ອຍ ສາມ (3) ແຫ່ງ.

ທຶນຈົດທະບຽນຂອງທະນາຄານໃນເບື້ອງຕົ້ນ ແມ່ນ 33,882,440,000 ກີບ. ທຶນຈົດທະບຽນຖອກແລ້ວຂອງທະນາຄານ ໃນວັນທີ 31 ທັນວາ 2021 ແມ່ນ 424,666,100,000 ກີບ (31 ທັນວາ 2020: 404,666,100,000 ກີບ)

ທະນາຄານ ຮ່ວມພັດທະນາ ຈຳກັດ

## ຂໍ້ມູນທົ່ວໄປ

### ຄະນະອຳນວຍການ

ສະມາຊິກຄະນະອຳນວຍການຂອງທະນາຄານ ພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2021 ແລະ ໃນວັນທີ ທີ່ອອກບົດລາຍງານສະບັບນີ້ປະກອບມີ:

| ຊື່ | ຕຳແໜ່ງ | ວັນທີແຕ່ງຕັ້ງ |
|---|---|---|
| ທ່ານ ເອກະພັນ ພະພິທັກ | ປະທານ | ແຕ່ງຕັ້ງຄືນ ວັນທີ 29 ກັນຍາ 2020 |
| ທ່ານ ສຸນທອນ ຈັນທະວົງ | ຮອງສະພາ | ແຕ່ງຕັ້ງຄືນ ວັນທີ 05 ຕຸລາ 2020 |
| ທ່ານ ວິໄລ ສີພະພອນ | ສະມາຊິກ | ແຕ່ງຕັ້ງຄືນ ວັນທີ 05 ຕຸລາ 2020 |
| ທ່ານ ບຸນສະຫວ່າງ ພິລາໄຊພິທັກ | ສະມາຊິກ | ແຕ່ງຕັ້ງຄືນ ວັນທີ 05 ຕຸລາ 2020 |
| ທ່ານ ປອ. ບົວວອນ ຈັນທະນິເລີດ | ສະມາຊິກ | ແຕ່ງຕັ້ງຄືນ ວັນທີ 05 ຕຸລາ 2020 |
| ທ່ານນາງ ພອນສະໄໝ ສຸຂະພິນ | ສະມາຊິກ | ແຕ່ງຕັ້ງ ວັນທີ 05 ຕຸລາ 2020 |
| ທ່ານ ສາຄອນ ຍໍພັນໄຊ | ສະມາຊິກ | ແຕ່ງຕັ້ງ ວັນທີ 05 ຕຸລາ 2020 |
| ທ່ານ ຄຳສີງ ສອນສີນນະວົງ | ສະມາຊິກ | ແຕ່ງຕັ້ງ ວັນທີ 05 ຕຸລາ 2020 |
| ທ່ານ ບຸນຊຸ່ມ ສີສະຫວາດ | ສະມາຊິກ | ແຕ່ງຕັ້ງ ວັນທີ 05 ຕຸລາ 2020 |

### ຄະນະບໍລິຫານ

ສະມາຊິກສະພາອຳນວຍການພາຍໃນປີ ແລະ ໃນມື້ອອກເອກະສານລາຍງານການເງິນສະບັບນີ້ ມີດັ່ງລຸ່ມນີ້:

| ຊື່ | ຕຳແໜ່ງ | ວັນທີແຕ່ງຕັ້ງ / ລາອອກ |
|---|---|---|
| ທ່ານ ວິໄລ ສີພະພອນ | ອຳນວຍການໃຫຍ່ | ແຕ່ງຕັ້ງ ວັນທີ 19 ກັນຍາ 2019 |
| ທ່ານນາງ ພອນສະໄໝ ສຸຂະພິນ | ຮອງອຳນວຍການໃຫຍ່ | ແຕ່ງຕັ້ງຄືນ ວັນທີ 05 ຕຸລາ 2020 |
| ທ່ານ ຄຳສີງ ສອນສີນນະວົງ | ຮອງອຳນວຍການໃຫຍ່ | ແຕ່ງຕັ້ງຄືນ ວັນທີ 05 ຕຸລາ 2020 |
| ທ່ານ ຈັນຊະນະ ສີງຫາວົງ | ຮອງອຳນວຍການໃຫຍ່ | ແຕ່ງຕັ້ງຄືນ ວັນທີ 05 ຕຸລາ 2020 |
| ທ່ານ ສາຄອນ ຍໍພັນໄຊ | ຮອງອຳນວຍການໃຫຍ່ | ແຕ່ງຕັ້ງຄືນ ວັນທີ 05 ຕຸລາ 2020 |
| ທ່ານ ຄຳຊູ ຢ່າງ | ຮອງອຳນວຍການໃຫຍ່ | ແຕ່ງຕັ້ງຄືນ ວັນທີ 05 ຕຸລາ 2020 |
| ທ່ານ ວິລັນເດດ ໄວຍະສິນສັກ | ຮອງອຳນວຍການໃຫຍ່ | ແຕ່ງຕັ້ງ ວັນທີ 05 ຕຸລາ 2020 |

### ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງທະນາຄານ ຕັ້ງແຕ່ວັນທີ 01 ມັງກອນ 2021 ຈົນເຖິງ 29 ເມສາ 2022 ແລະ ວັນທີອອກບົດລາຍງານສະບັບນີ້ ແມ່ນ ທ່ານ ວິໄລ ສີພະພອນ - ຜູ້ອຳນວຍການໃຫຍ່.

### ນັກກວດສອບ

ຜູ້ກວດສອບບັນຊີຂອງທະນາຄານ ແມ່ນ ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກູບເປີສ໌ (ລາວ) ຈຳກັດ ຜູ້ດຽວ

**ທະນາຄານ ຮ່ວມພັດທະນາ ຈຳກັດ**

**ບົດລາຍງານຂອງຄະນະອຳນວຍການ**

ຄະນະອຳນວຍການຂອງທະນາຄານ ຮ່ວມພັດທະນາ ຈຳກັດ ("ທະນາຄານ") ມີຄວາມຍິນດີໃນການນຳສະເໜີເອກະສານລາຍງານການເງິນຂອງທະນາຄານ ສຳລັບປີສິ້ນສຸດວັນທີ 31 ທັນວາ 2021.

**ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນ**

ຄະນະອຳນວຍການຂອງທະນາຄານມີໜ້າທີ່ຮັບຜິດຊອບຕໍ່ການກະກຽມເອກະສານລາຍງານການເງິນ ທີ່ສະແດງໃຫ້ເຫັນຄວາມຖືກຕ້ອງຕາມຄວາມເປັນຈິງ ສຳລັບຖານະການເງິນ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດຂອງທະນາຄານພາຍໃນປີ. ໃນການກະກຽມເອກະສານລາຍງານການເງິນ. ຄະນະອຳນວຍການຂອງທະນາຄານຈະຕ້ອງ:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສະໝໍ່າສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫລງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມມາດຕະຖານ, ສິ່ງທີ່ໄດ້ປະຕິບັດແຕກຕ່າງຈາກມາດຕະຖານຈະຕ້ອງຖືກເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ທະນາຄານຫາກຕັ້ງຂໍ້ສົມມຸດຖານ ຫລື ຄາດຄະເນວ່າທະນາຄານຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະອຳນວຍການຂອງທະນາຄານຮັບປະກັນວ່າ ບັນດາຂໍ້ມູນທາງການບັນຊີທີ່ຖືກບັນທຶກໄວ້ນັ້ນ ໄດ້ສະແດງເຖິງຄວາມຖືກຕ້ອງຢູ່ຕະຫລອດ, ຮັບປະກັນວ່າທຸກໆການເຄື່ອນໄຫວ ແລະ ຖານະການເງິນຂອງທະນາຄານ ແລະ ການບັນທຶກການບັນຊີແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ທະນາຄານຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຄົງທີ່ຂອງທະນາຄານ ແລະ ຮັບປະກັນວ່າທະນາຄານມີ ຂັ້ນຕອນຄົ້ນຫາ ແລະ ປ້ອງກັນການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະອຳນວຍການຂອງທະນາຄານໄດ້ຢັ້ງຢືນວ່າ ທະນາຄານ ໄດ້ປະຕິບັດຕາມຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນ.

**ຖະແຫລງການຂອງຄະນະອຳນວຍການ**

ຄະນະອຳນວຍການຂອງທະນາຄານມີຄວາມຍິນດີຖະແຫລງວ່າ ເອກະສານລາຍງານການເງິນແມ່ນໄດ້ສະແດງພາບພົດອັນຖືກຕ້ອງ ແລະ ມີຄວາມຍຸດຕິທຳກ່ຽວກັບຖານະການເງິນຂອງທະນາຄານ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021, ລວມທັງຜົນການດຳເນີນງານຂອງທະນາຄານ ແລະ ກະແສເງິນສົດພາຍໃນປີອີງຕາມກົດໝາຍການບັນຊີຂອງ ສປປ ລາວ ແລະ ລະບຽບການ ທີ່ກຳນົດໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

ຕາງໜ້າ ແລະ ໃນນາມຂອງຄະນະອຳນວຍການ:

ທະນາຄານ ແຫ່ງ ສປປ ລາວ ຮ່ວມພັດທະນາ ຈຳກັດ JOINT DEVELOPMENT BANK ນະຄອນ ຫລວງ ວຽງຈັນ

ທ່ານ ວິໄລ ສີພະພອນ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

29 ເມສາ 2022

**ບົດລາຍງານຂອງຜູ້ກວດສອບບັນຊີອິດສະຫຼະ**

**ເຖິງ: ຄະນະບໍລິຫານຂອງທະນາຄານ ທະນາຄານ ຣ່ວມພັດທະນາ**

## ຄວາມເຫັນ

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນ ຂອງ ທະນາຄານ ຣ່ວມພັດທະນາ (ທະນາຄານ) ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2021 ໄດ້ສະແດງສະຖານະທາງການເງິນຂອງທະນາຄານ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບລະບຽບການ ແລະ ແຈ້ງການທີ່ກ່ຽວຂ້ອງ ຂອງ ທະນາຄານ ແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີ ຊຶ່ງອະທິບາຍໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານສະບັບນີ້.

## ເອກະສານລາຍງານການເງິນທີ່ກວດສອບ

ເອກະສານລາຍງານການເງິນຂອງທະນາຄານປະກອບດ້ວຍ:

- ໃບລາຍງານຜົນໄດ້ຮັບ ສຳລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານຖານະການເງິນ ວັນທີ 31 ທັນວາ 2021
- ໃບລາຍງານສ່ວນປ່ຽນແປງທຶນ ສຳລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດມື້ດຽວກັນ ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ສັງລວມຫຼັກການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

## ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs) ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ມາດຕະຖານໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບຂອງຜູ້ກວດສອບພາຍນອກ ສຳລັບການກວດສອບ ເອກະສານລາຍງານການເງິນ ຂອງບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫລັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເຫມາະສົມເພື່ອເປັນພື້ນຖານສຳລັບການອອກຄວາມເຫັນຂອງພວກເຮົາ.

## ຄວາມເປັນອິດສະຫລະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກ ທະນາຄານ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນ ນານາຊາດ ສຳລັບນັກບັນຊີ (IESBA Code). ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

*ບໍລິສັດ ພຣາຍສວໍເຕີເຮົາສຄູບເປີສ (ລາວ) ຈຳກັດຜູ້ດຽວ. ຊັ້ນ 4 ອາຄານອາລີອັນສ໌, ອາຄານເລກທີ 33 ຖະໜົນລ້ານຊ້າງ ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ. ໂທ: 856 21 222718/9. www.pwc.com/la*

**ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານ ການບັນຊີ ແລະ ຂໍ້ຫ້າມໃນການແຈກຢາຍ ແລະ ການນຳໃຊ້ບົດລາຍງານການເງິນ.**

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງພື້ນຖານການກະກຽມເອກະສານລາຍງານການເງິນ. ເອກະສານລາຍງານການເງິນນີ້ໄດ້ຖືກກະກຽມຕາມນະໂຍບາຍການບັນຊີຂອງທະນາຄານທີ່ໄດ້ອະທິບາຍໄວ້ ໃນບົດຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ. ເຊິ່ງເອກະສານລາຍງານການເງິນອາດບໍ່ເໝາະສົມກັບວັດຖຸປະສົງອື່ນ.

ບົດລາຍງານຂອງພວກເຮົາມີໄວ້ສຳລັບທະນາຄານ ແລະ ທະນາຄານແຫ່ງ ສປປ ລາວ, ບໍ່ຄວນແຈກຢາຍໃຫ້ບຸກຄົນອື່ນ ຫຼື ນຳໃຊ້ໂດຍບຸກຄົນອື່ນທີ່ບໍ່ແມ່ນທະນາຄານ ແລະ ທະນາຄານແຫ່ງ ສປປ ລາວ. ຄວາມເຫັນຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິງນີ້.

**ຄວາມຮັບຜິດຊອບຂອງຄະນະຜູ້ອຳນວຍການ ຕໍ່ເອກະສານລາຍງານການເງິນ**

ຄະນະຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບ ລະບຽບການ ການບັນຊີທີ່ກ່ຽວຂ້ອງ ແລະ ແຈ້ງການ ຂອງ ທະນາຄານແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ອຳນວຍການໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນທີ່ປາສະຈາກ ການລາຍງານບໍ່ຖືກຕ້ອງ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດ ຂອງທະນາຄານໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບ ກິດຈະການ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

**ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ**

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນ ເຊິ່ງລວມຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ, ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ. ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ແທດເໝາະກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງທະນາຄານ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ບໍລິຫານ.
- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ບໍລິຫານ ແລະ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈໃຫ້ເກີດຂໍ້ສົງໃສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງທະນາຄານ ຫຼື ບໍ່, ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານລາຍງານການເງິນເຊິ່ງການເປີດເຜີຍດັ່ງກ່າວບໍ່ພຽງພໍທີ່ຈະເຮັດໃຫ້ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ ຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍຕາມ ເຫດການ ຫຼື ສະພາບຕົວຈິງໃນອານາຄົດອາດເປັນສາເຫດໃຫ້ທະນາຄານບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ພວກເຮົາໄດ້ສື່ສານກັບຜູ້ບໍລິຫານ ກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກຜ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ບໍລິສັດ ພຣາຍສວໍເຕີເຮົ້າສກູບເປີສ (ລາວ) ຈຳກັດຜູ້ດຽວ

ໂດຍ: ອະພິສິດ ທ່ຽງຕົງພົນໄຊ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
29 ເມສາ 2022

ທະນາຄານ ຮ່ວມພັດທະນາ ຈຳກັດ

## ໃບລາຍງານຜົນການດຳເນີນງານ
## ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

| | | ບົດ ອະທິບາຍ | 2021 ກີບ | 2020 ກີບ |
|---|---|---|---|---|
| **A.** | **ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ** | | | |
| 1. | ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ | 4 | 524.715.359.547 | 329.731.830.822 |
| 2. | ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ | 4 | (385.379.538.559) | (259.603.257.712) |
| **I.** | **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | | **139.335.820.988** | **70.128.573.110** |
| 3 | ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ | 5 | 156.402.282.832 | 141.232.161.868 |
| 4 | ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | 5 | (15.388.848.120) | (9.434.253.380) |
| 5 | (ຂາດທຶນ)/ກຳໄລສຸດທິ ຈາກການລົງທຶນໃນຫຼັກຊັບ | 6 | 7.947.669.420 | (930.000.000) |
| 6 | ກຳໄລສຸດທິ ຈາກການຊື້-ຂາຍເງິນຕາຕ່າງປະເທດ | 9 | 32.134.036.671 | 26.515.104.641 |
| **II.** | **ລາຍຮັບສຸດທິຈາກການດຳເນີນງານ** | | **320.430.961.791** | **227.511.586.239** |
| **B** | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | |
| 7 | ລາຍຮັບອື່ນໆຈາກການດຳເນີນງານ | 7 | 5.106.808.165 | 8.487.552.820 |
| 8 | ລາຍຈ່າຍບໍລິຫານ | | (106.585.915.934) | (95.100.281.034) |
| 8.1 | ເງິນເດືອນ ແລະ ຄ່າໃຊ້ຈ່າຍກ່ຽວກັບພະນັກງານ | 8 | (54.317.781.282) | (48.330.262.130) |
| 8.2 | ລາຍຈ່າຍອື່ນໆຈາກການບໍລິຫານ | 10 | (52.268.134.652) | (46.770.018.904) |
| 9 | ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 19; 20 | (27.932.538.925) | (21.034.031.212) |
| 10 | ລາຍຈ່າຍອື່ນໆໃນການດຳເນີນງານ | 11 | (21.942.013.015) | (12.768.250.609) |
| 11 | ເງິນແຮສຸດທິສຳລັບໜີ້ຕ້ອງຮັບທວງຍາກລົງເປັນລາຍຈ່າຍ | | 292.064.730 | 2.076.211.390 |
| **III.** | **ລວມກຳໄລກ່ອນເສຍອາກອນ** | | **169.369.366.812** | **109.172.787.594** |
| 12 | ອາກອນກຳໄລພາຍໃນປີ | 27 | (35.178.995.109) | (23,489.074.122) |
| **IV.** | **ກຳໄລຫລັງເສຍອາກອນ** | | **134.190.371.703** | **85.683.713.472** |

ກະກຽມໂດຍ:

ທ່ານ ຄຳສິງ ສອນສີນນະວົງ
ຮອງອຳນວຍການ - ຫົວໜ້າບັນຊີ
ນະຄອນຫລວງວຽງຈັນ, ສປປ ລາວ
29 ເມສາ 2022

ອະນຸມັດໂດຍ:

ທ່ານ ວິໄລ ສີພະພອນ
ຜູ້ອຳນວຍການໃຫຍ່

ທະນາຄານ ແຫ່ງ ສປປລາວ ທະນາຄານ ຮ່ວມພັດທະນາ ຈຳກັດ JOINT DEVELOPMENT BANK ນະຄອນ ຫລວງ ວຽງຈັນ

## ໃບລາຍງານຖານະການເງິນ
## ສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

| | | ບົດ ອະທິບາຍ | 2021 ກີບ | 2020 ກີບ |
|---|---|---|---|---|
| | **ຊັບສິນ** | | | |
| I | **ເງິນສົດ ແລະ ເງິນຝາກຢູ່ກັບ ທຫລ** | | **1.912.677.709.346** | **2.186.223.607.571** |
| | 1. ເງິນສົດໃນຄັງ | 12 | 759.710.458.567 | 720.715.407.800 |
| | 2. ເງິນຝາກແຮບັງຄັບ ແລະ ເງິນຝາກກະແສລາຍວັນ | 13 | 1.152.967.250.779 | 1.465.508.199.771 |
| II | **ໜີ້ຕ້ອງຮັບຈາກທະນາຄານອື່ນ** | 14 | **309.597.231.965** | **236.012.927.446** |
| | 1. ເງິນຝາກກະແສລາຍວັນ | | 160.550.196.180 | 173.200.203.737 |
| | 2. ເງິນຝາກມີກໍານົດ | | 80.000.000.000 | 18.502.000.000 |
| | 3. ເງິນຝາກປະຢັດ | | 69.047.035.785 | 44.310.723.709 |
| III | **ການລົງທຶນໃນຫລັກຊັບ** | 15 | **382.368.143.544** | **29.350.000.000** |
| | 1. ຫຼັກຊັບປະເພດມີໄວ້ເພື່ອຂາຍ | | 2.350.000.000 | 2.350.000.000 |
| | 2. ຫຼັກຊັບປະເພດຖືໄວ້ຈົນຄົບກໍານົດ | | 380.018.143.544 | 27.000.000.000 |
| IV | **ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ຫລັງຫັກ ເງິນແຮສະເພາະສໍາລັບກິດຈະກໍາສິນເຊື່ອ** | 16 | **7.566.038.980.897** | **4.595.516.104.427** |
| V | **ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ** | 17 | **1.187.780.000** | **854.440.000** |
| VI | **ຊັບສິນບັດຄົງທີ່** | | **261.166.854.777** | **233.469.119.490** |
| | 1. ການກໍ່ສ້າງກໍາລັງດໍາເນີນ ແລະ ຊັບສິນບັດຄົງທີ່ພວມເຄື່ອນຍ້າຍ | 18 | 8.094.624.961 | 2.751.157.513 |
| | 2. ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 19 | 150.445.255.563 | 137.921.992.665 |
| | 3. ຊັບສິນບັດຄົງທີ່ມີຕົວຕົນ | 20 | 102.626.974.253 | 92.795.969.312 |
| VII | **ຊັບສິນອື່ນໆ** | | **537.214.153.695** | **397.622.772.236** |
| | 1. ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ | | 107.858.827.015 | 33.723.803.830 |
| | 2. ຊັບສິນອື່ນໆ | 21 | 429.355.326.680 | 363.898.968.406 |
| | **ລວມຊັບສິນ** | | **10.970.250.854.224** | **7.679.048.971.170** |

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 14 ເຖິງ 43 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

ທະນາຄານ ຮ່ວມພັດທະນາ ຈໍາກັດ

## ໃບລາຍງານຖານະການເງິນ
## ສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

| | | ບົດ ອະທິບາຍ | 2021 ກີບ | 2020 ກີບ |
|---|---|---|---|---|
| | **ໜີ້ສິນ ແລະ ທຶນ** | | | |
| I | **ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ** | 22 | **1.166.258.757.310** | **943.108.026.948** |
| | 1. ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ | | 8.296.295.035 | 1.448.026.948 |
| | 2. ເງິນຝາກມີກໍານົດ | | 255.587360.000 | 168.360.000.000 |
| | 3. ເງິນກູ້ຢືມຈາກທະນາຄານອື່ນ | | 901.902.617.128 | 773.300.000.000 |
| | 4. ໜີ້ຕ້ອງສົ່ງອື່ນໆ | | 472.485.147 | - |
| II | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | 23 | **8.727.580.548.918** | **5.945.354.898.355** |
| | 1. ເງິນຝາກກະແສລາຍວັນ, ເງິນຝາກປະຫຍັດ ແລະ ເງິນຝາກມັດຈໍາ | | 2.022.939.282.416 | 1.552.200.736.325 |
| | 2. ເງິນຝາກມີກໍານົດ | | 6.704.639.766.502 | 4.393.152.311.830 |
| | 3. ໜີ້ຕ້ອງສົ່ງອື່ນໆ | | 1.500.000 | 1.850.200 |
| III | **ໜີ້ສິນອື່ນໆ** | | **402.539.492.652** | **223.783.535.954** |
| | 1. ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ | | 291.125.871.465 | 188.469.815.564 |
| | 2. ໜີ້ສິນອື່ນໆ | | 111.413.621.187 | 35.313.720.390 |
| | **ລວມໜີ້ສິນ** | | **10.296.378.798.880** | **7.112.246.461.257** |
| IV | **ທຶນ ແລະ ຄັງສໍາຮອງ** | | | |
| | 1. ທຶນຈົດທະບຽນ | 24 | 424.666.100.000 | 404.666.100.000 |
| | 2. ຄັງສະສົມຕາມລະບຽບການ | 25 | 17.351.998.475 | 8.960.056.385 |
| | 3. ຄັງຂະຫຍາຍທຸລະກິດ | 25 | 9.030.673.961 | 4.834.702.916 |
| | 4. ເງິນແຮທົ່ວໄປສໍາລັບກິດຈະກໍາດ້ານສິນເຊື່ອ | 16.3 | 37.906.011.116 | 22.695.329.628 |
| | 5. ເງິນແຮຊັບສິນທີ່ບໍ່ສາມາດເກັບຄືນໄດ້ | | 94.029.775.080 | 94.029.775.080 |
| | 6. ຂາດທຶນສະສົມ | | 90.887.496.712 | 31.616.545.904 |
| | **ລວມທຶນ** | | **673.872.055.344** | **566.802.50.913** |
| | **ລວມໜີ້ສິນ ແລະ ທຶນ** | | **10.970.250.854.224** | **7.679.048.971.170** |

ກະກຽມໂດຍ:

ທ່ານ ຄໍາສິງ ສອນສິນນະວົງ
ຮອງອໍານວຍການ - ຫົວໜ້າບັນຊີ
ນະຄອນຫລວງວຽງຈັນ, ສປປ ລາວ
29 ເມສາ 2022

ອະນຸມັດໂດຍ:

ທ່ານ ວິໄລ ສີພະພອນ
ຜູ້ອໍານວຍການໃຫຍ່

ທະນາຄານ ຮ່ວມພັດທະນາ ຈໍາກັດ JOINT DEVELOPMENT BANK ນະຄອນຫລວງວຽງຈັນ

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 14 ເຖິງ 43 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

## ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
## ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

| | ທຶນຈົດທະບຽນ | ຄັງສະສົມຕາມລະບຽບການ | ຄັງຂະຫຍາຍທຸລະກິດ | ເງິນແຮທົ່ວໄປສຳລັບກິດຈະກຳດ້ານສິນເຊື່ອ | ສ່ວນປ່ຽນແປງຈາກການຕີລາຄາຊັບສິນຄືນໃໝ່ | ກຳໄລສະສົມ | ລວມ |
|---|---|---|---|---|---|---|---|
| | ກີບ | ກີບ | ກີບ | ກີບ | ກີບ | ກີບ | ກີບ |
| **ຍອດເຫລືອໃນວັນທີ 31 ທັນວາ 2021** | **404.666.100.000** | **8.960.056.385** | **4.834.702.916** | **22.695.329.628** | **94.029.775.080** | **31.616.545.904** | **566.802.509.913** |
| ກຳໄລສຸດທິພາຍໃນປີ | - | - | - | - | - | 134.190.371.703 | **134.190.371.703** |
| ທຶນຈົດທະບຽນ ເພີ່ມເຕີມ (ບົດອະທິບາຍ 24) | 20.000.000.000 | - | - | - | - | - | **20.000.000.000** |
| ແບ່ງເຂົ້າຄັງສະສົມຕາມລະບຽບການພາຍໃນປີ (ບົດອະທິບາຍ 25) | - | - | 4.195.971.045 | - | - | (4.195.971.045) | **-** |
| ເງິນປັນຜົນ (ບົດອະທິບາຍ 26) | - | - | - | - | - | (62.331.507.760) | **(62.331.507.760)** |
| ສ່ວນປ່ຽນແປງກອງທຶນສຳຮອງ | - | 8.391.942.090 | - | - | - | (8.391.942.090) | |
| ສຳຮອງໜີ້ເສຍ (ບົດອະທິບາຍ 25) | - | - | - | 15.210.681.488 | - | - | **15.210.681.488** |
| **ຍອດເຫລືອໃນວັນທີ 31 ທັນວາ 2021** | **424.666.100.000** | **17.351.998.476** | **9.030.673.961** | **37.906.011.116** | **94.029.775.080** | **90.887.496.712** | **673.872.055.344** |

ກະກຽມໂດຍ:

ທ່ານ ຄຳສີງ ສອນສີນນະວົງ
ຮອງອຳນວຍການ - ຫົວໜ້າບັນຊີ

ອະນຸມັດໂດຍ:

ທ່ານ ວິໄລ ສີພະພອນ
ຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
29 ເມສາ 2022

## ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
## ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

| | ທຶນຈົດທະບຽນ<br>ລ້ານກີບ | ຄັງສະສົມຕາມລະບຽບການ<br>ລ້ານກີບ | ຄັງຂະຫຍາຍທຸລະກິດ<br>ລ້ານກີບ | ເງິນແຮທົ່ວໄປສຳລັບກິດຈະກຳດ້ານສິນເຊື່ອ<br>ລ້ານກີບ | ເງິນແຮຊັບສິນທີ່ບໍ່ສາມາດເກັບຄືນໄດ້<br>ລ້ານກີບ | ເງິນແຮອື່ນໆ<br>ລ້ານກີບ | ລວມ<br>ລ້ານກີບ |
|---|---|---|---|---|---|---|---|
| **ຍອດເຫລືອໃນວັນທີ 31 ທັນວາ 2020** | **404.666.100.000** | **391.685.038** | **550.517.242** | **16.488.032.405** | **94.029.775.080** | **(10.642.712.546)** | **505.483.397.219** |
| ກຳໄລສຸດທິພາຍໃນປີ | - | - | - | - | - | 85.683.713.472 | **85.683.713.472** |
| ແບ່ງເຂົ້າຄັງສະສົມຕາມລະບຽບການພາຍໃນປີ (ບົດອະທິບາຍ 25) | - | - | 4.284.185.674 | - | - | 4.284.185.674 | - |
| ເງິນປັນຜົນ | - | - | - | - | - | (30.571.898.001) | **(30.571.898.001)** |
| ສ່ວນປ່ຽນແປງກອງທຶນສຳຮອງ (ບົດອະທິບາຍ 25) | - | 8.568.371.347 | - | - | - | (8.568.371.347) | - |
| ສຳຮອງໜີ້ເສຍ | - | - | - | 6.207.297.223 | - | - | **6.207.297.223** |
| **ຍອດເຫລືອໃນວັນທີ 31 ທັນວາ 2020** | **404.666.100.000** | **8.960.056.385** | **4.834.702.916** | **22.695.329.628** | **94.029.775.080** | **31.616.545.904** | **566.802.509.913** |

ກະກຽມໂດຍ:

ທ່ານ ຄຳສິງ ສອນສິນນະວົງ
ຮອງອຳນວຍການ - ຫົວໜ້າບັນຊີ

ອະນຸມັດໂດຍ:

ທ່ານ ວິໄລ ສີພະພອນ
ຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
29 ເມສາ 2022

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 14 ເຖິງ 43 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

## ໃບລາຍງານກະແສເງິນສົດ
## ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

| | ບົດ ອະທິບາຍ | 2021 ກີບ | 2020 ກີບ |
|---|---|---|---|
| **ກິດຈະກຳການດຳເນີນງານ** | | | |
| **ກຳໄລ/(ຂາດທຶນ) ສຸດທິກ່ອນຫັກອາກອນ** | | **134.190.371.703** | **109.172.787.594** |
| ດັດແກ້ສຳລັບ: | | | |
| ລາຍຈ່າຍຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 19; 20 | 28.035.385.843 | 21.034.031.212 |
| ລາຍຈ່າຍເງິນແຮສຳລັບການສູນເສຍເງິນກູ້ | 16.3 | 12.269.623.486 | 5.296.646.888 |
| ລາຍຮັບດອກເບ້ຍ | 4 | (524.715.359.547) | (329.731.830.822) |
| ລາຍຈ່າຍດອກເບ້ຍ | 4 | 385.379.538.559 | 259.603.257.712 |
| **ກະແສເງິນສົດຈາກກຳໄລໃນການດຳເນີນງານກ່ອນການປ່ຽນແປງຊັບສິນ ແລະ ໜີ້ສິນໃນການດຳເນີນງານ** | | **35.159.560.044** | **65.374.892.584** |
| ເພີ່ມຂຶ້ນ/(ຫຼຸດລົງ) ໃນຊັບສິນກຳລັງດຳເນີນງານ | | | |
| ໜີ້ຕ້ອງຮັບຈາກທະນາຄານອື່ນ | | (65.151.928.394) | (28.102.013.935) |
| ເງິນກູ້ຢືມໃຫ້ລູກຄ້າ | | (2.973.042.892.280) | (1.279.835.625.107) |
| ດອກເບ້ຍຄ້າງຮັບ | | (74.135.023.185) | 22.870.000.000 |
| ຊັບສິນອື່ນໆ | | (454.864.322.332) | (96.161.669.596) |
| ເພີ່ມຂຶ້ນ/(ຫຼຸດລົງ) ໃນໜີ້ສິນກຳລັງດຳເນີນງານ | | | |
| ໜີ້ຕ້ອງສົ່ງໃຫ້ ທຫລ ແລະ ທະນາຄານອື່ນ | | 222.678.245.215 | 828.050.490.722 |
| ໜີ້ຕ້ອງສົ່ງໃຫ້ລູກຄ້າ | | 2.797.266.000.063 | 1.705.260.532.811 |
| ໜີ້ສິນອື່ນໆ | | 203.612.690.686 | 10.498.717.028 |
| ກະແສເງິນສົດສຸດທິຈາກ (ໃຊ້ໃນ) ກິດຈະກຳການດຳເນີນງານ ອາກອນກຳໄລຊຳລະໃນປີ | | **(308.477.670.183)** | **1.227.955.324.507** |
| ຈ່າຍດອກເບ້ຍ | | (282.723.482.658) | (203.001.882.624) |
| ລາຍຮັບດອກເບ້ຍ | | 450.580.336.362 | 313.947.329.508 |
| ຈ່າຍອາກອນກຳໄລ | | (38.210.627.529) | (24.542.623.702) |
| **ກະແສເງິນສົດສຸດທິ ທີ່ເກີດຈາກ/(ນຳໃຊ້ໃນ) ກິດຈະກຳການດຳເນີນງານ** | | **(178.831.444.008)** | **1.314.358.147.689** |
| **ກິດຈະກຳການລົງທຶນ** | | | |
| ຊື້ ແລະ ປຸກສ້າງຊັບສິນບັດຄົງທີ່ | 18, 20 | (34.768.801.195) | (27.388.303.140) |
| ຊື້ ແລະ ປຸກສ້າງຊັບສິນບັດຄົງທີ່ບໍ່ມີຕົວຕົນ | 19 | (21.022.442.948) | - |
| ຮັບເງິນຈາກການຂາຍຊັບສິນ | 20 | 58.123.013 | 119.333.456 |
| ເງິນປັນຜົນຮັບຈາກການລົງເງິນໃນຫຼັກຊັບ | | - | 100.000.000 |
| ຈ່າຍເງິນໃນການລົງທຶນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | | (333.340.000) | (340.000.000) |
| **ກະແສເງິນສົດສຸດທິ ທີ່ເກີດຈາກ/(ນຳໃຊ້ໃນ) ກິດຈະກຳການລົງທຶນ** | | **(56.066.461.130)** | **(27.508.969.684)** |

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 14 ເຖິງ 43 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

## ໃບລາຍງານກະແສເງິນສົດ
## ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

| | ບົດ ອະທິບາຍ | 2021 ກີບ | 2020 ກີບ |
|---|---|---|---|
| **ກິດຈະກຳຈັດຫາເງິນ** | | | |
| ຈ່າຍເງິນປັນຜົນ | 26 | (50.215.616.962) | (23.014.708.200) |
| ການຊຳລະໜີ້ສິນຕາມສັນຍາເຊົ່າ | 24 | 20.000.000.000 | - |
| **ກະແສເງິນສົດສຸດທິນຳໃຊ້ເຂົ້າໃນກິດຈະກຳຈັດຫາເງິນ** | | **(30.215.616.962)** | **(23.014.708.200)** |
| **ການປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **(265.113.522.100)** | **1.263.834.469.805** |
| ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ | | 2.188.015.165.087 | 924.180.695.282 |
| **ເງິນສົດ ແລະ ທຽບເທົ່າເງິນສົດທ້າຍໃນປີ** | 27 | **1.922.901.642.987** | **2.188.015.165.087** |
| **ກິດຈະກຳການລົງທຶນທີ່ບໍ່ແມ່ນເງິນສົດ** | | | |
| ການຈ່າຍເງິນປັນຜົນໂດຍຫັກລົບກັບລູກໜີ້ຜູ້ຖືຮຸ້ນ | 26 | 12.115.890.798 | 7.557.189.800 |

ກະກຽມໂດຍ

ອະນຸມັດໂດຍ

ທະນາຄານ ແຫ່ງ ສປປລາວ ທະນາຄານ ຮ່ວມພັດທະນາ ຈຳກັດ JOINT DEVELOPMENT BANK ນະຄອນ ຫລວງ ວຽງຈັນ

ທ່ານ ຄຳສິງ ສອນສິນນະວົງ
ຮອງອຳນວຍການ - ຫົວໜ້າບັນຊີ

ທ່ານ ວິໄລ ສີພະພອນ
ຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
29 ເມສາ 2022

## 1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານ ຮ່ວມພັດທະນາ ຈຳກັດ ("ທະນາຄານ") ແມ່ນທະນາຄານເອກະຊົນຈຳກັດ ທີ່ໄດ້ດຳເນີນງານ ແລະ ຈົດທະບຽນຢູ່ ໃນ ສປປ ລາວ.

ກິດຈະກຳຫຼັກຂອງທະນາຄານແມ່ນໃຫ້ບໍລິການທາງດ້ານ: ການລະດົມທຶນ ແລະ ການຮັບຝາກເງິນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຈາກບັນດາອົງການຈັດຕັ້ງ ແລະ ບຸກຄົນຕ່າງໆ; ການປ່ອຍກູ້ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວໃຫ້ແກ່ອົງການຈັດຕັ້ງ ແລະ ບຸກຄົນທົ່ວໄປ ອີງຕາມເນື້ອໃນ ແລະ ຄວາມອາດສາມາດຂອງແຫຼ່ງເງິນທຶນຂອງທະນາຄານ; ການເຮັດທຸລະກຳເງິນຕາຕ່າງປະເທດ; ບໍລິການດ້ານການເງິນລະຫວ່າງປະເທດ; ສ່ວນຫຼຸດໃບຢັ້ງຢືນການຄ້າ, ພັນທະບັດ ແລະ ເອກະສານທີ່ມີມູນຄ່າຕ່າງໆ. ໃຫ້ບໍລິການອື່ນໆດ້ານການທະນາຄານ ຕາມທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ອາຄານ ເລກທີ 82, ຖະໜົນລ້ານຊ້າງ, ນະຄອນຫຼວງວຽງຈັນ, ສປປ ລາວ. ໃນວັນທີ 31 ທັນວາ 2021, ທະນາຄານມີສຳນັກງານໃຫຍ່ ໜຶ່ງ (1) ແຫ່ງ, ໜ່ວຍບໍລິການ ຫ້າສິບຫົກ (56) ແລະ ໜ່ວຍບໍລິການຍ່ອຍ ສາມ (3) ແຫ່ງ.

ຂໍ້ມູນການເງິນແມ່ນສະແດງເປັນເງິນກີບ ແລະ ປັດເສດເປັນເງິນລ້ານທີ່ໃກ້ທີ່ສຸດ, ເວັ້ນເສຍແຕ່ໄດ້ລະບຸໄວ້ເປັນຢ່າງອື່ນ

ຂໍ້ມູນທາງການເງິນໄດ້ອະນຸມັດໂດຍ (ຄະນະຜູ້ອຳນວຍການ) ໃນວັນທີ 29 ເມສາ 2022.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

ເອກະສານລາຍງານການເງິນໄດ້ມີການກະກຽມຕາມຫຼັກການນະໂຍບາຍບັນຊີຂອງທະນະຄານທີ່ໄດ້ລະບຸໄວ້ດັ່ງລຸ່ມນີ້.

### 2.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ຂອງທະນາຄານຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີຂອງທະນາຄານ ດັ່ງທີ່ອະທິບາຍໃນບົດຊ້ອນທ້າຍ ຂອງເອກະສານລາຍງານການເງິນ ແລະ ກົດລະບຽບ ແລະ ແຈ້ງການຂອງທະນາຄານແຫ່ງ ສປປ ລາວ. ການນຳໃຊ້ຫຼັກການພື້ນຖານການບັນຊີ ອາດຈະແຕກຕ່າງຈາກຫຼັກການບັນຊີ ທີ່ຮັບຮອງເອົາໂດຍທົ່ວໄປໃນບັນດາປະເທດອື່ນໆ ແລະ ທີ່ບໍ່ຢູ່ໃນອຳນາດຄຸ້ມຄອງ ຂອງ ສປປ ລາວ. ເອກະສານລາຍງານການເງິນສະບັບນີ້ ບໍ່ໄດ້ເຈດຕະນາ ສະແດງຖານະການເງິນ ແລະ ຜົນການດຳເນີນງານ ທີ່ບໍ່ຢູ່ໃນອຳນາດຄຸ້ມຄອງ ຂອງ ສປປ ລາວ. ດ້ວຍເຫດນີ້ເອກະສານລາຍງານການເງິນດັ່ງກ່າວນີ້ ຈະໃຫ້ຂໍ້ມູນສະເພາະຜູ້ທີ່ໄດ້ຮັບແຈ້ງກ່ຽວກັບນະໂຍບາຍການບັນຊີຂອງທະນາຄານ ແລະ ແຈ້ງການອື່ນໆ ທີ່ກ່ຽວຂ້ອງ ເຊິ່ງອອກໂດຍທະນາຄານແຫ່ງ ສປປ ລາວ.

ດັ່ງນັ້ນ, ເອກະສານລາຍງານການເງິນເຫຼົ່ານີ້ຈະສິ່ງເຖິງຜູ້ທີ່ໄດ້ຮັບແຈ້ງກ່ຽວກັບນະໂຍບາຍການບັນຊີຂອງທະນາຄານ ແລະ ລະບຽບການບັນຊີທີ່ກ່ຽວຂ້ອງ ແລະ ອີງຕາມການປະການຂອງທະນາຄານແຫ່ງ ສປປ ລາວເທົ່ານັ້ນ.

ການກະກຽມເອກະສານລາຍງານການເງິນເພື່ອໃຫ້ສອດຄ່ອງກັບວິທີການບັນຊີຂອງທະນາຄານທີ່ຮັບຮອງເອົານັ້ນ ຮຽກຮ້ອງໃຫ້ຝ່າຍຜູ້ບໍລິຫານ ຕ້ອງມີການຄາດຄະເນ ແລະ ວາງຂໍ້ສົມມຸດຖານຫຼາຍປະການ ເພື່ອ ສະແດງໃຫ້ເຫັນຈຳນວນເງິນຂອງຊັບສິນ ແລະ ໜີ້ສິນ, ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ກະກຽມເອກະສານລາຍງານການເງິນ ແລະ ຈຳນວນລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາລາຍງານ. ສະນັ້ນ, ຕົວເລກທີ່ຄາດຄະເນປະຕິບັດດັ່ງກ່າວ ຕ້ອງກຳນົດຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງຝ່າຍຜູ້ບໍລິຫານ ກ່ຽວກັບ ເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ, ຊຶ່ງຜົນຂອງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນໃນເບື້ອງຕົ້ນ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)

### 2.1 ພື້ນຖານໃນການກະກຽມ (ຕໍ່)

ຕົວເລກປຽບທຽບຂອງປີກ່ອນໄດ້ຖືກຈັດປະເພດຄືນໃໝ່ເພື່ອຈຸດປະສົງປຽບທຽບຂອງບົດລາຍງານການເງິນໃນວັນທີ 31 ທັນວາ 2021. ການຈັດປະເພດຄືນໃໝ່ມີດັ່ງລຸ່ມນີ້:

ໃບລາຍງານກະແສເງິນສົດ

| | 31 ທັນວາ 2020 - ຕາມການລາຍງານປີກ່ອນ<br>ກີບ | ການຈັດປະເພດຄືນ<br>ກີບ | 31 ທັນວາ 2020 - ຕາມການປັບປຸງຄືນໃໝ່<br>ກີບ |
|---|---|---|---|
| (ເພີ່ມຂຶ້ນ)/ຫຼຸດລົງ ໃນຊັບສິນການດໍາເນີນງານ | | | |
| ຊັບສິນອື່ນໆ | (88.604.479.796) | (7.577.189.800) | (96.161.669.596) |
| **ກິດຈະກໍາທາງການເງິນ** | | | |
| ຈ່າຍເງິນປັນຜົນ | (30.571.898.000) | 7.577.189.800 | 23.014.708.200 |

ເອກະສານລາຍງານການເງິນ ແມ່ນໄດ້ຖືກກະກຽມພາຍໃຕ້ຫຼັກການໃນການບັນທຶກໂດຍອີງຕາມມູນຄ່າຕົ້ນທຶນເບື້ອງຕົ້ນ.

### 2.2 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ

*ການຮັບຮູ້ລາຍຮັບດອກເບ້ຍ*

ລາຍຮັບຈາກດອກເບ້ຍແມ່ນຖືກຮັບຮູ້ຕາມຫຼັກການບັນຊີຄ້າງຮັບບົນພື້ນຖານການນໍາໃຊ້ອັດຕາດອກເບ້ຍທີ່ໄດ້ລະບຸໄວ້ໃນສັນຍາເງິນກູ້ກັບລູກຄ້າ ຍົກເວັ້ນບັນຊີທີ່ບໍ່ເກີດດອກອອກຜົນ ແລະ ພິຈາລະນາສະເພາະ.

ໃນກໍລະນີທີ່ບັນຊີທີ່ບໍ່ເກີດດອກອອກຜົນ ຫຼື ໃນເວລາທີ່ຜູ້ບໍລິຫານເຊື່ອວ່າຜູ້ກູ້ຢືມບໍ່ມີຄວາມສາມາດໃນການຈ່າຍຄືນເງິນຕົ້ນ ແລະ ດອກເບ້ຍ ແມ່ນຈະຍຸດການບັນທຶກລາຍຮັບດອກເບ້ຍ ແລະ ສໍາລັບລາຍການທີ່ບັນທຶກຮຽບຮ້ອຍແລ້ວຈະຖືກກັບລາຍການຄືນ ຫຼື ໄດ້ຮັບຕົວຈິງ, ລາຍຮັບດອກເບ້ຍຈະຖືກຮັບຮູ້ຖ້າຫາກມີການຮຽກເກັບດອກເບ້ຍຄ້າງຮັບຈາກເງິນໃຫ້ກູ້ຢືມທີ່ບໍ່ເກີດດອກອອກຜົນພາຍຫຼັງໄດ້. ບັນຊີລູກຄ້າຈະຖືວ່າເປັນບັນຊີທີ່ບໍ່ເກີດດອກອອກຜົນເມື່ອການຊໍາລະເງິນຄືນໃຫ້ກັບທະນະຄານໄດ້ຄ້າງຊໍາລະເກີນສາມເດືອນ ຫຼື 90 ວັນ. ເຊິ່ງເປັນໄປຕາມກົດລະບຽບຂອງ ທຫລ.

*ການຮັບຮູ້ລາຍຈ່າຍດອກເບ້ຍ*

ລາຍຈ່າຍດອກເບ້ຍແມ່ນຈ່າຍໃຫ້ສໍາລັບເງິນຝາກຈາກລູກຄ້າ, ທະນາຄານອື່ນ, ສະຖາບັນການເງິນ ແລະ ເງິນກູ້ຢືມ ແມ່ນຖືກຮັບຮູ້ຕາມຫຼັກການບັນຊີບົນພື້ນຖານຄ້າງຈ່າຍ.

### 2.3 ການຮັບຮູ້ລາຍຮັບຄ່າທໍານຽມ ແລະ ຄ່າບໍລິການ

ຄ່າທໍານຽມ ແລະ ຄ່າບໍລິການ ປະກອບມີ ຄ່າທໍານຽມທີ່ໄດ້ຮັບສໍາລັບການໂອນເງິນ (ລວມເຖິງການຊໍາລະແຊກ), ທຸລະກໍາແລກປ່ຽນເງິນຕາຕ່າງປະເທດ, ການຄໍ້າປະກັນທາງການເງິນ ແລະ ບໍລິການດ້ານການທະນາຄານອື່ນໆ.

ລາຍຮັບ ຄ່າທໍານຽມ ແລະ ຄ່າບໍລິການແມ່ນຮັບຮູ້ໃນໃບລາຍງານຜົນໄດ້ຮັບສະເພາະກິດຈະການຕາມພື້ນຖານເງິນສົດ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.4 ການຮັບຮູ້ລາຍຮັບເງິນປັນຜົນ

ລາຍຮັບເງິນປັນຜົນຂອງການລົງທຶນໃນຮຸ້ນແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການໃນເວລາທີ່ທະນາຄານມີສິດໃນການຮັບເງິນປັນຜົນນັ້ນ.

### 2.5 ສະກຸນເງິນທີ່ໃຊ້ໃນການເຄື່ອນໄຫວ ແລະ ການປ່ຽນຄ່າເງິນຕາຕ່າງປະເທດ

ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນເງິນຕາຕ່າງປະເທດ ແມ່ນຈະໄດ້ມີການປ່ຽນຄ່າເງິນຕາດັ່ງກ່າວເປັນສະກຸນເງິນກີບ ໃນທ້າຍປີໂດຍໃຊ້ອັດຕາແລກປ່ຽນໃນມື້ທີ່ປິດບັນຊີທ້າຍງວດ. ລາຍຮັບ ແລະ ລາຍຈ່າຍ ທີ່ເປັນສະກຸນເງິນຕາຕ່າງປະເທດທີ່ເກີດຂຶ້ນໃນໄລຍະຈະຖືກປ່ຽນຄ່າເປັນເງິນສະກຸນເງິນກີບໂດຍໃຊ້ອັດຕາແລກປ່ຽນສະເລ່ຍຂອງເດືອນ. ກຳໄລ ແລະ ຂາດທຶນ ຈາກອັດຕາແລກປ່ຽນ ຂອງ ຊັບສິນ ແລະ ໜີ້ສິນ ທາງການເງິນ ແມ່ນໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບເມື່ອລາຍການນັ້ນເກີດຂຶ້ນ.

### 2.6 ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີ ເງິນສົດ ແລະ ການລົງທຶນໄລຍະສັ້ນ ທີ່ມີສະພາບຄ່ອງສູງ ໂດຍມີອາຍຸຄົບກຳນົດຕໍ່າກວ່າ ຫຼື ທຽບເທົ່າ 30 ວັນ ເຊິ່ງພ້ອມທີ່ຈະປ່ຽນເປັນເງິນສົດໄດ້ ແລະ ບັນຊີໜີ້ຕ້ອງຮັບຈາກທະນາຄານອື່ນ ທີ່ມີອາຍຸຄົບກຳນົດຕໍ່າກວ່າ ຫຼື ທຽບເທົ່າ 30 ວັນ.

### 2.7 ເງິນກູ້ໃຫ້ລູກຄ້າ

ເງິນກູ້ໃຫ້ລູກຄ້າ ແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດເຫຼືອທ້າຍ ລົບໃຫ້ ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ.

### 2.8 ການຈັດປະເພດຂອງການສຳຮອງສຳລັບກິດຈະກຳສິນເຊື່ອ

*ເງິນແຮສຳລັບໜີ້ເສຍ*

*ການຈັດປະເພດ*

ອີງຕາມ ລະບຽບການ ຂອງທະນາຄານແຫ່ງ ສ.ປ.ປ ລາວ, ສະບັບເລກທີ 512/ທຫລ, ລົງວັນທີ 29 ມິຖຸນາ 2018, ໜັງສືທາງການສະບັບເລກທີ 898/ CBSD ລົງວັນທີ 14 ພະຈິກ 2018 ຮຽກຮ້ອງໃຫ້ມີການຈັດຊັ້ນໜີ້ ແລະ ເງິນແຮສຳລັບໜີ້ເສຍ. ດັ່ງນັ້ນ, ເງິນກູ້ແມ່ນຖືກຈັດຊັ້ນເປັນເງິນກູ້ທີ່ເກີດດອກອອກຜົນ ຫຼື ເງິນກູ້ທີ່ບໍ່ມີການເຄື່ອນໄຫວໂດຍອີງຕາມການຄ້າງຊຳລະ ແລະ ປັດໃຈທາງດ້ານຄຸນນະພາບອື່ນໆ.

ເງິນກູ້ຖືກຈັດຊັ້ນເປັນເງິນກູ້ປົກກະຕິ (ກຸ່ມ A) ຫຼື ເງິນກູ້ທີ່ຄວນເອົາໃຈໃສ່ ຫຼື ຕິດຕາມພິເສດ (ກຸ່ມ B) ແມ່ນຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ, ເງິນກູ້ທີ່ຖືກຈັດຊັ້ນເປັນຕໍ່າກ່ວາມາດຕະຖານ (ກຸ່ມ C) ຫຼື ໜີ້ສົງໄສ (ກຸ່ມ D) ຫຼື ໜີ້ສູນ (ກຸ່ມ E) ແມ່ນຖືກພິຈາລະນາເປັນເງິນກູ້ທີ່ບໍ່ມີການເຄື່ອນໄຫວ.

ທະນາຄານໄດ້ຈັດຕັ້ງປະຕິບັດກົດລະບຽບ 238/ທຫລ, ລົງວັນທີ 26 ມີນາ 2020 ແລະ ຄຳແນະນຳ 249/ທຫລ ລົງວັນທີ 11 ພຶດສະພາ 2020 ກ່ຽວກັບການປັບໂຄງສ້າງ, ການຂະຫຍາຍເວລາ ແລະ ການຮັກສາກຸ່ມການຈັດຊັ້ນເງິນກູ້ທີ່ຊ່ວຍເຫຼືອຜູ້ທີ່ໄດ້ຮັບຜົນກະທົບຈາກພະຍາດໂຄວິດ-19. ດັ່ງນັ້ນ, ທະນາຄານຈຶ່ງໄດ້ປັບໂຄງສ້າງສິນເຊື່ອທີ່ສອດຄ່ອງກັບເງື່ອນໄຂ ແລະ ຈັດຊັ້ນໜີ້ກ່ອນວັນທີ 1 ມັງກອນ 2020.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.8 ການຈັດປະເພດຂອງການສຳຮອງສຳລັບກິດຈະກຳສິນເຊື່ອ (ຕໍ່)

*ເງິນແຮສຳລັບໜີ້ເສຍ (ຕໍ່)*

*ເງິນແຮ*

ອີງຕາມກົດລະບຽບສະບັບໃໝ່ເລກທີ 512/ທຫລ ລົງວັນທີ 29 ມິຖຸນາ 2018 ກ່ຽວກັບວິທີການຄິດໄລ່ສຳຮອງເງິນແຮສຳລັບໜີ້ສິນໄດ້ລະບຸວ່າທະນາຄານສາມາດນຳມາພິຈາລະນາໃນມູນຄ່າຫຼັກຊັບຄ້ຳປະກັນໃນອັດຕາເປີເຊັນທີ່ລະບຸໄວ້ໃນກົດລະບຽບຈະຖືກຫັກອອກຈາກຍອດຄ້າງຊຳລະເງິນໃຫ້ກູ້ຢືມກ່ອນແລ້ວໃຫ້ອັດຕາສ່ວນຂອງເງິນແຮສຳລັບໜີ້ເສຍໃຫ້.

ອີງຕາມກົດລະບຽບສະບັບເລກທີ 784/ທຫລ ລົງວັນທີ 3 ກັນຍາ 2019 ທະນາຄານທຸລະກິດທີ່ໃຫ້ເງິນກູ້ຢືມແກ່ ທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ (SMEs) ພາຍໃຕ້ຂໍ້ກົດນົດນີ້ມີສິດຕັ້ງສຳຮອງເງິນແຮໃນອັດຕາ 0,20% ຂອງຍອດຄ້າງຊຳລະເງິນໃຫ້ກູ້ຢືມແກ່ SMEs ເຊິ່ງຈັດຢູ່ໃນປະເພດປົກກະຕິ.

ສຳລັບເງິນກູ້ທີ່ຕິດພັນກັບໂຄງການພັດທະນາພື້ນຖານໂຄງລ່າງຂອງລັດຖະບານທີ່ຄ້າງຊຳລະ ແຕ່ໂຄງການຊຳລະ ແມ່ນພາຍໃນກຳນົດເວລາຂອງລັດຖະບານ, ທະນາຄານໄດ້ຮັບອະນຸຍາດໃຫ້ຈັດປະເພດເງິນກູ້ດັ່ງກ່າວເປັນເງິນກູ້ພິເສດຕາມຈົດໝາຍເຫດທາງລັດຖະການ ສະບັບເລກທີ 172/ທຫລ ລົງວັນທີ 15 ພຶດສະພາ 2017 ອອກໂດຍທະນາຄານແຫ່ງ ສປປ ລາວ

ເງິນແຮແມ່ນໄດ້ຖືກຈັດປະເພດເປັນ ທົ່ວໄປ ແລະ ສະເພາະ ໂດຍອີງໃສ່ການຈັດປະເພດເງິນໃຫ້ກູ້ຢືມ. ຂ້າງລຸ່ມນີ້ແມ່ນສະຫຼຸບສັງລວມຂອງອັດຕາ ເງິນແຮສຳຮອງ ທີ່ນຳໃຊ້ສຳລັບການຈັດປະເພດເງິນໃຫ້ກູ້ຢືມແຕ່ລະປະເພດ ໃນວັນທີຂອງໃບລາຍງານຖານະການເງິນ.

| ປະເພດຂອງໜີ້ | ປະເພດ | ການບັນຊີສຳລັບຍອດເຫຼືອເງິນແຮ | ການຫັກເງິນແຮ | ການບັນຊີສຳລັບສ່ວນປ່ຽນແປງໃນຍອດເຫຼືອເງິນແຮ |
|---|---|---|---|---|
| **ເງິນກູ້ທີ່ເກີດດອກອອກຜົນ (ທົ່ວໄປ)** | | | | |
| A | ໜີ້ປົກກະຕິ | ບັນທຶກໃນທຶນ ແລະ ຄັງສຳຮອງ | 0.5% | ລາຍຈ່າຍ/ລາຍຮັບອື່ນ |
| B | ໜີ້ຄວນເອົາໃຈໃສ່ | ເພື່ອຫັກກັບຍອດເງິນໃຫ້ກູ້ຢືມ | 3% - 5% | ລາຍຈ່າຍ/ລາຍຮັບອື່ນ |
| **ເງິນກູ້ຢືມທີ່ບໍ່ມີການເຄື່ອນໄຫວ (ສະເພາະ)** | | | | |
| C | ໜີ້ຕ່ຳກ່ວາມາດຕະຖານ | ຫັກກັບຍອດເງິນໃຫ້ກູ້ຢືມ | 20% | ເງິນແຮສຸດທິສຳລັບ ໜີ້ NPL |
| D | ໜີ້ສົງໃສ | ຫັກກັບຍອດເງິນໃຫ້ກູ້ຢືມ | 50% | ເງິນແຮສຸດທິສຳລັບ ໜີ້ NPL |
| E | ໜີ້ສູນ | ຫັກກັບຍອດເງິນໃຫ້ກູ້ຢືມ | 100% | ເງິນແຮສຸດທິສຳລັບ ໜີ້ NPL |

(i) ຈຳນວນ ເງິນແຮ ແມ່ນຖືກຄິດໄລ່ໂດຍສູດຕໍ່ໄປນີ້:

a. ໜີ້ປົກກະຕິ = ອັດຕາເງິນແຮ x ຍອດຄ້າງຊຳລະຂອງເງິນໃຫ້ກູ້ຢືມ
b. ໜີ້ຄວນເອົາໃຈໃສ່ = ອັດຕາເງິນແຮ x ຍອດຄ້າງຊຳລະຂອງເງິນໃຫ້ກູ້ຢືມ

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.8 ການຈັດປະເພດຂອງການສຳຮອງສຳລັບກິດຈະກຳສິນເຊື່ອ (ຕໍ່)

*ເງິນແຮ (ຕໍ່)*

(ii) ຍອດເງິນແຮສຳລັບເງິນໃຫ້ກູ້ຢືມປົກກະຕິໃນກຸ່ມ A ຈະຖືກບັນທຶກໃນໃບລາຍງານຖານະການເງິນພາຍໃຕ້ "ເງິນແຮສຳລັບເງິນໃຫ້ກູ້ຢືມປົກກະຕິ" ພາຍໃຕ້ທຶນ ແລະ ເງິນແຮຍອດສະສົມຂອງເງິນແຮສຳລັບເງິນກູ້ຢືມທີ່ບໍ່ມີການເຄື່ອນໄຫວ ແລະ ເງິນແຮສຳລັບ ໜີ້ປົກກະຕິກຸ່ມ B ໄດ້ຖືກບັນທຶກໃນ ໃບລາຍງານຖານະການເງິນພາຍໃຕ້ "ເງິນໃຫ້ກູ້ຢືມແກ່ລູກຄ້າ, ຫັກ ເງິນແຮ ເງິນໃຫ້ກູ້ຢືມທີ່ບໍ່ມີການເຄື່ອນໄຫວ".

(iii) ການປ່ຽນແປງໃນເງິນແຮສຳລັບເງິນກູ້ຢືມປົກກະຕິ ແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ ເປັນ "ລາຍຈ່າຍໃນການດຳເນີນງານອື່ນໆ" ສຳລັບ ລາຍຈ່າຍເງິນແຮ ແລະ "ລາຍຮັບໃນການດຳເນີນງານອື່ນໆ" ສຳລັບການກັບລາຍການຂອງລາຍຈ່າຍເງິນແຮ.ການປ່ຽນແປງໃນເງິນແຮ່ສຳລັບເງິນໃຫ້ກູ້ຢືມບໍ່ມີການເຄື່ອນໄຫວ ແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ ເປັນ "ເງິນແຮສຸດທິສຳລັບເງິນໃຫ້ກູ້ຢືມທີ່ບໍ່ມີການເຄື່ອນໄຫວປ່ຽນເປັນ /(ກັບລາຍການອອກ) ລາຍຈ່າຍ".

### 2.9 ສັນຍາເຊົ່າ

ນະໂຍບາຍການບັນຊີ ຂອງທະນາຄານ ອີງຕາມແຈ້ງການ ສະບັບເລກທີ 1433/ທຫລ ລົງວັນທີ 24 ຕຸລາ 2019 ຊຶ່ງຮຽກຮ້ອງໃຫ້ບັນດາທະນາຄານທຸລະກິດນຳໃຊ້ IFRS 16 ໃນການກະກຽມ ແລະ ການລາຍງານເອກະສານລາຍງານການເງິນ.

ທະນາຄານຮັບຮູ້ສິດການໃຊ້ຊັບສິນ ແລະ ໜີ້ສິນສັນຍາເຊົ່າສຳລັບສັນຍາເຊົ່າທີ່ເຄີຍຈັດປະເພດມາກ່ອນເປັນສັນຍາເຊົ່າທາງການເງິນ ຫຼື ສັນຍາເຊົ່າໃນການດຳເນີນງານ, ຍົກເວັ້ນສັນຍາເຊົ່າໄລຍະສັ້ນ ແລະ ສັນຍາເຊົ່າຊັບສິນທີ່ມີມູນຄ່າຕໍ່າ. ສິດການໃຊ້ຊັບສິນສຳລັບສັນຍາເຊົ່າສ່ວນໃຫຍ່ຮັບຮູ້ໂດຍມູນຄ່າຕາມບັນຊີ ຖ້າວ່າມາດຕະຖານດັ່ງກ່າວໄດ້ຖືກນຳໃຊ້ສະເໝີໄປ, ນອກເໜືອຈາກການນຳໃຊ້ອັດຕາການກູ້ຢືມທີ່ເພີ່ມຂຶ້ນໃນທຳອິດຂອງການຍື່ນຄຳຮ້ອງຂໍ, ໃນສັນຍາເຊົ່າບາງລາຍການ, ສິດການໃຊ້ຊັບສິນຖືກຮັບຮູ້ຈຳນວນທີ່ເທົ່າກັບໜີ້ສິນຕາມສັນນຍາເຊົ່າ, ປັບປຸງສຳລັບຄ່າເຊົ່າຈ່າຍລ່ວງໜ້າ ແລະ ຄ່າເຊົ່າຄ້າງຈ່າຍທີ່ຮັບຮູ້ກ່ອນໜ້ານີ້ ໜີ້ສິນຕາມສັນຍາເຊົ່າຮັບຮູ້ຕາມມູນຄ່າປະຈຸບັນຂອງຈຳນວນເງິນທີ່ຊຳລະຕາມສັນຍາເຊົ່າທີ່ເຫຼືອຄິດຫຼຸດໂດຍໃຊ້ອັດຕາການກູ້ຢືມໃນມື້ທຳອິດຂອງການຍື່ນຄຳຮ້ອງຂໍ.

ສັນຍາເຊົ່າສຳລັບການເຊົ່າສຳນັກງານ ທີ່ຈະຮັບຮອງເອົາ IFRS16 ມາໃຊ້ ທະນາຄານໄດ້ຈັດປະເພດສັນຍາເຊົ່າແຕ່ລະລາຍ ໃນວັນທີເລີ່ມຕົ້ນເປັນສັນຍາເຊົ່າການດຳເນີນງານ. ບັນທຶກຄ່າເຊົ່າເປັນລາຍຈ່າຍຕາມໄລຍະເວລາຂອງສັນຍາ.

*ສິດການນຳໃຊ້ຊັບສິນ*

ເມື່ອເລີ່ມຕົ້ນຂອງສັນຍາ, ທະນາຄານຈະປະເມີນວ່າສັນຍາແມ່ນ, ຫຼືປະກອບດ້ວຍ, ການຈັດການ ສັນຍາເຊົ່າໂດຍອີງໃສ່ວ່າສັນຍາທີ່ສົ່ງກັບຜູ້ໃຊ້ (ຜູ້ເຊົ່າ) ສິດທິໃນການຄວບຄຸມການນຳໃຊ້ຊັບສິນທີ່ກຳນົດໃນໄລຍະເວລາໃດໜຶ່ງ. ແລກປ່ຽນເພື່ອພິຈາລະນາ. ຖ້າສັນຍາມີຫຼາຍກວ່າອົງປະກອບຂອງສັນຍາເຊົ່າ, ຫຼືການປະສົມປະສານຂອງສັນຍາເຊົ່າ ແລະ ການບໍລິການ, ສິ່ງຕອບແທນຈະຖືກປັນສ່ວນໃຫ້ແຕ່ລະອົງປະກອບຂອງສັນຍາເຊົ່າ ແລະ ບໍ່ແມ່ນການໃຫ້ເຊົ່າໂດຍສະຫຼຸບ ແລະ ໃນແຕ່ລະການວັດມູນຄ່າໃຫມ່ແຕ່ລະຄັ້ງຕາມລາຄາຂາຍ ແບບແຍກສ່ວນທີ່ກ່ຽວຂ້ອງກັບທະນາຄານລວມອົງປະກອບການເຊົ່າ ແລະ ບໍ່ແມ່ນການໃຫ້ເຊົ່າ, ໃນກໍລະນີທີ່ບໍ່ສາມາດແຍກອົງປະກອບທີ່ບໍ່ແມ່ນການໃຫ້ເຊົ່າ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.10 ເງິນລົງທຶນໃນຫຼັກຊັບ

*ເງິນລົງທຶນເພື່ອຂາຍ*

ການລົງທຶນເພື່ອຂາຍລວມມີ ທຶນຮອນທີ່ທະນາຄານຕັ້ງໃຈຖືໄວ້ເພື່ອການລົງທຶນ ແລະ ພ້ອມທີ່ຈະຊື້ຂາຍ. ຫຼັກຊັບເຫຼົ່ານີ້ບໍ່ໄດ້ຖືກຊື້ຂາຍເລື້ອຍໆແຕ່ສາມາດຂາຍໄດ້ທຸກເວລາທີ່ຜົນປະໂຫຍດຂອງທຸລະກຳ.

ການລົງທຶນເພື່ອຂາຍແມ່ນໄດ້ຮັບການຮັບຮູ້ໃນເບື້ອງຕົ້ນດ້ວຍຕົ້ນທຶນ ແລະ ສະເໜີຕໍ່ມາດ້ວຍລາຄາຕໍ່າກວ່າການເສື່ອມລາຄາ (ຖ້າມີ).

ແຕ່ລະໄລຍະ, ການລົງທຶນເພື່ອຂາຍແມ່ນຂຶ້ນກັບການທົບທວນການດຸ່ນດ່ຽງ. ການຈັດຫາການດຸ່ນດ່ຽງຂອງຫຼັກຊັບເຫຼົ່ານີ້ແມ່ນເຮັດເມື່ອມີການຫຼຸດລົງຢ່າງຫຼວງຫຼາຍ ຫຼືເປັນເວລາດົນນານຂອງມູນຄ່າຍຸດຕິທຳຕໍ່າກວ່າຕົ້ນທຶນຂອງພວກເຂົາ. ການສະໜອງການດຸ່ນດ່ຽງຖືກຮັບຮູ້ເປັນ "ກຳໄລ/(ການສູນເສຍ) ສຸດທິຈາກການລົງທຶນຫຼັກຊັບ" ໃນໃບລາຍງານລາຍຮັບ.

*ຫຼັກຊັບທີ່ຖືຈົນຄົບກຳນົດ*

ເງິນລົງທຶນໃນຫຼັກຊັບທີ່ຖືຈົນຄົບກຳນົດ ແມ່ນຫຼັກຊັບໜີ້ ທີ່ມີການກຳນົດການຊຳລະ ຫຼື ຄົບກຳນົດ ຊຶ່ງທະນາຄານ ມີຄວາມຕັ້ງໃຈ ແລະ ມີຄວາມສາມາດທີ່ຈະຖືຈົນຄົບກຳນົດ ເພື່ອຮັບດອກເບ້ຍ. ເມື່ອຂາຍກ່ອນວັນທີກຳນົດ ຫຼັກຊັບເຫຼົ່ານີ້ຈະຖືກຈັດປະເພດຄືນໃໝ່ເປັນຫຼັກຊັບເພື່ອການຄ້າ ຫຼື ຫຼັກຊັບເພື່ອຂາຍ.

ຫຼັກຊັບທີ່ຖືຈົນຄົບກຳນົດແມ່ນຮັບຮູ້ເບື້ອງຕົ້ນໃນລາຄາຕົ້ນທຶນ ແລະ ສະແດງໃນລາຄາຕົ້ນທຶນ ສ່ວນເກີນ ແລະ ສ່ວນຫຼຸດທີ່ເກີດຈາກການຊື້ຫຼັກຊັບຫັກຄ່າເສື່ອມໃນໃບລາຍງານຜົນໄດ້ຮັບໂດຍໃຊ້ວິທີສະໝໍ່າສະເໝີ ຕະຫຼອດປີຕັ້ງແຕ່ວັນທີຊື້ຈົນເຖິງວັນທີຄົບກຳນົດ.

ຫຼັກຊັບທີ່ຖືຈົນຄົບກຳນົດແມ່ນຕ້ອງທົບທວນຄ່າເສື່ອມມູນຄ່າຄືນເປັນໄລຍະ, ການສຳຮອງຄ່າເສື່ອມມູນຄ່າຂອງຫຼັກຊັບເຫຼົ່ານີ້ແມ່ນສ້າງຂຶ້ນເມື່ອມູ່ນຄ່າຍຸດຕິທຳຂອງຫຼັກຊັບດັ່ງກ່າວລົດລົງຢ່າງສາລະສຳຄັນ ຫຼື ເປັນເວລາດົນ ການສຳຮອງຄ່າເສື່ອມມູນຄ່າຮັບຮູ້ເປັນ "ກຳໄລສຸດທິ/(ຂາດທຶນ) ຈາກການລົງທຶນໃນຫຼັກຊັບ" ໃນໃບລາຍງານຜົນໄດ້ຮັບ.

### 2.11 ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ

ການລົງທຶນຂອງທະນາຄານແມ່ນຖືກຮັບຮູ້ເປັນຕົ້ນທຶນ ແລະ ສະແດງຢູ່ໃນໃບລາຍງານຖານະການເງິນ. ເງິນປັນຜົນ ແລະ ລາຍຮັບຈາກການລົງທຶນໃນ ວິສາຫະກິດປະສົມຖືກສະແດງຢູ່ໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການຄື: "ກຳໄລສຸດທິຈາກການລົງທຶນໃນຫຼັກຊັບທຶນ".

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.9 ສັນຍາເຊົ່າ (ຕໍ່)

*ສິດການນຳໃຊ້ຊັບສິນ (ຕໍ່)*

ທະນາຄານຮັບຮູ້ ສິດການໃຊ້ຊັບສິນໃນມື້ເລີ່ມຕົ້ນສັນຍາເຊົ່າ (ເຊັ່ນວັນທີຊັບສິນພ້ອມໃຊ້ງານ). ສິນການໃຊ້ຊັບສິນແມ່ນສະແດງມູນຄ່າຕົ້ນທຶນເດີມຫັກໃຫ້ຄ່າຫຼູ້ຍຫ້ຽນສະສົມ ແລະ ຂາດທຶນຈາກການດ້ອຍຄ່າ, ແລະ ປັບປຸງສຳລັບການປະເມີນມູນຄ່າຄືນໃໝ່ຂອງໜີ້ສິນສັນຍາເຊົ່າ. ຕົ້ນທຶນຂອງສິນການໃຊ້ຊັບສິນປະກອບມີ ຈຳນວນຂອງໜີ້ສິນຕາມສັນຍາເຊົ່າທີ່ປັບປຸງ ສຳລັບການຊຳລະຄ່າເຊົ່າທີ່ເກີດຂຶ້ນໃນ ຫຼື ກ່ອນວັນເລີ່ມຕົ້ນ ບວກໃຫ້ຕົ້ນທຶນທາງກົງມື້ທຳອິດທີ່ເກີດຂຶ້ນ ແລະ ລາຍຈ່າຍໂດຍປະມານໃນການຮື້ຖອນ ແລະ ເອົາຊັບສິນທີ່ຕິດພັນອອກ ຫຼື ຟື້ນຟູຊັບສິນທີ່ຕິດພັນ ຫຼື ສະຖານທີ່ທີ່ຊັບສິນຕັ້ງຢູ່, ຫັກໃຫ້ແຮງຈູງໃດໃນການເຊົ່າທີ່ໄດ້ຮັບ. ໄລຍະເວລາຂອງສັນຍາເຊົ່າ ລວມເຖິງໄລຍະເວລາທີ່ຄອບຄຸມໂດຍທາງເລືອກໃນການຂະຫຍາຍ ຖ້າຫາກກຸ່ມບໍລິສັດ ມີຄວາມໝັ້ນໃຈພໍສົມຄວນທີ່ຈະໃຊ້ຕົວເລືອກນັ້ນ. ຍົກເວັ້ນແຕ່ທະນາຄານ ມີຄວາມໝັ້ນໃຈພໍສົມຄວນຈະໄດ້ຮັບສິດຄວາມເປັນເຈົ້າຂອງຂອງຊັບສິນຕາມສັນຍາເຊົ່າໃນມື້ສິ້ນສຸດໄລຍະເວລາສັນຍາເຊົ່າ, ຮັບຮູ້ສິດການໃຊ້ຊັບສິນແມ່ນຫັກຄ່າຫຼູ້ຍຫ້ຽນແບບສະໝໍ່າສະເໝີ ກັບໄລຍະເວລາທີ່ສັ້ນຂຶ້ນທີ່ປະເມີນອາຍຸການໃຊ້ງານ ແລະ ຕາມໄລຍະເວລາຂອງສັນຍາເຊົ່າ. ສິດການໃຊ້ຊັບສິນຕ້ອງໄດ້ຮັບການປະເມີນການດ້ອຍຄ່າ.

*ໜີ້ສິນຕາມສັນຍາເຊົ່າ*

